**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 41 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17 / 11 / 21

# ມະຕິ

## ກອງປະຊຸມສະພາແຫ່ງຊາດ

## ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 9 ເດືອນ, ຄາດຄະເນໝົດ ປີ 2021 ແລະ ທິດທາງແຜນການ ປະຈໍາປີ 2022

- ອີງຕາມລັດຖະທໍາມະນູນແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015 ມາດຕາ 53;
- ອີງຕາມກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020, ມາດຕາ 12 ຂໍ້ 2 ແລະ ມາດຕາ 59 ຂໍ້ 1;
- ອີງຕາມບົດລາຍງານຂອງລັດຖະບານ ລົງວັນທີ 01 ພະຈິກ 2021 ກ່ຽວກັບ ການຈັດຕັ້ງການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 9 ເດືອນ, ວຽກງານຈຸດສຸມ 3 ເດືອນ ທ້າຍປີ 2021 ແລະ ທິດທາງແຜນການປະຈໍາປີ 2022.

ຜ່ານການຄົ້ນຄວ້າ, ປະກອບຄໍາເຫັນ ແລະ ພິຈາລະນາ ຢ່າງກວ້າງຂວາງ ດ້ວຍຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງຂອງສະມາຊິກສະພາແຫ່ງຊາດ ໃນຖານະທີ່ເປັນຕົວແທນແຫ່ງສິດຜົນປະໂຫຍດສູງສຸດ ຂອງປະຊາຊົນລາວບັນດາເຜົ່າ ຕໍ່ບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 9 ເດືອນ, ຄາດຄະເນໝົດ ປີ 2021 ແລະ ທິດທາງແຜນການ ປະຈໍາປີ 2022 ໃນວາລະການດໍາເນີນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX,

## ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 9 ເດືອນ, ຄາດຄະເນໝົດ ປີ 2021**

ກອງປະຊຸມຍ້ອງຍໍຊົມເຊີຍ ແລະ ເຫັນດີເປັນເອກະພາບຕໍ່ການລາຍງານ ຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 9 ເດືອນ, ຄາດຄະເນໝົດ ປີ 2021 ຊຶ່ງໄດ້ຍົກໃຫ້ເຫັນ

ຄວາມພະຍາຍາມຂອງລັດຖະບານໃນການສູ້ຊົນຜ່ານຜ່າຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍປະການ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປີ 2021 ໃນທ່າມກາງທີ່ສະພາບການພາກພື້ນ ແລະ ສາກົນ ທີ່ມີການປ່ຽນແປງຢ່າງສັບສົນ, ມີສິ່ງທ້າທາຍຫຼາຍຢ່າງ ເປັນຕົ້ນ ການແຜ່ລະບາດຮອບໃໝ່ຂອງພະຍາດໂຄວິດ-19 ຢູ່ບັນດາປະເທດຄູ່ການຄ້າ ແລະ ຄູ່ຮ່ວມພັດທະນາຂອງປະເທດພວກເຮົາ, ຂໍ້ຂັດແຍ່ງທາງດ້ານການເມືອງ ແລະ ເສດຖະກິດຂອງ ປະເທດມະຫາອຳນາດ ບວກກັບ ຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ການແຜ່ລະບາດພະຍາດໂຄວິດ-19 ພາຍໃນປະເທດ ແລະ ປະກົດການຫຍໍ້ທໍ້ໃນສັງຄົມ ທີ່ເປັນໄພຄຸກຄາມ ແລະ ສົ່ງຜົນກະທົບຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຂອງປະເທດພວກເຮົາໃນປີ 2021. ແຕ່ລັດຖະບານກໍສາມາດຈັດຕັ້ງປະຕິບັດຄາດໝາຍທີ່ວາງໄວ້ຈຳນວນໜຶ່ງໄດ້ເກີນແຜນ ແລະ ຫຼາຍຄາດໝາຍມີຄວາມຄືບໜ້າດີເຮັດໃຫ້ເສດຖະກິດສືບຕໍ່ເຕີບໂຕຢ່າງຕໍ່ເນື່ອງ, ເສດຖະກິດມະຫາພາກມີສະຖຽນລະພາບ ແລະ ສັງຄົມມີຄວາມສະຫງົບໂດຍພື້ນຖານ.

ເຖິງຢ່າງໃດກໍຕາມ ກອງປະຊຸມ ສະເໜີໃຫ້ລັດຖະບານ ເອົາໃຈໃສ່ຊີ້ນຳບັນດາຂະແໜງການຂັ້ນສູນກາງ ແລະ ອົງການປົກຄອງຂັ້ນທ້ອງຖິ່ນ ສືບຕໍ່ສູ້ຊົນຈັດຕັ້ງປະຕິບັດບັນດາຄາດໝາຍທີ່ບໍ່ທັນບັນລຸຕາມແຜນ ໃນໄລຍະເວລາທີ່ຍັງເຫຼືອ 3 ເດືອນທ້າຍປີ 2021 ໃຫ້ບັນລຸຕາມຄາດໝາຍ ທີ່ໄດ້ຄາດຄະເນການຈັດຕັ້ງປະຕິບັດໝົດປີ 2021 ເປັນຕົ້ນ: ລວມຍອດຜະລິດຕະພັນພາຍໃນ (GDP) ໃຫ້ໄດ້ 3%, ແຜນລາຍຮັບ ໃຫ້ໄດ້ 98% ຂອງແຜນການ, ແຜນລາຍຈ່າຍ ໃຫ້ໄດ້ 100% ຂອງແຜນການ, ຂາດດຸນງົບປະມານ 2,53% ຂອງແຜນການ, ຄາດໝາຍວັດທະນະທຳ-ສັງຄົມ ເປັນຕົ້ນ: ສູ້ຊົນສັກວັກຊີນ ໃຫ້ກວມ 70% ຂຶ້ນໄປ ເພື່ອປະກັນປະຄອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃຫ້ໄປຕາມແຜນທີ່ໄດ້ກຳນົດ.

**ມາດຕາ 2 ຮັບຮອງເອົາທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2022**

ກອງປະຊຸມເຫັນດີເປັນເອກະພາບຕໍ່ບັນດາເນື້ອໃນທີ່ກຳນົດໄວ້ຢູ່ໃນຈຸດໝາຍລວມ, ທິດທາງ, ຄາດໝາຍ ແລະ ວຽກງານຈຸດສຸມ ພັດທະນາ ປະຈຳປີ 2022 ຕາມການສະເໜີຂອງລັດຖະບານ ພ້ອມທັງ ຮັບຮອງເອົາບັນດາຄາດໝາຍສູ້ຊົນແຕ່ລະດ້ານ ດັ່ງນີ້:

**1. ຄາດໝາຍດ້ານເສດຖະກິດມະຫາພາກ**

**1.1 ການເຕີບໂຕເສດຖະກິດ**

ຄາດຄະເນ ອັດຕາການເຕີບໂຕຂອງລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍຕົວໃນລະດັບ 4,5% ຂຶ້ນໄປ ຄິດເປັນມູນຄ່າຕາມລາຄາໃນປີ 192.145 ຕື້ກີບ, ລວມຍອດຜະລິດຕະພັນພາຍໃນ ສະເລ່ຍຕໍ່ຫົວຄົນ ເທົ່າກັບ 2.503 ໂດລາສະຫະລັດ, ລາຍໄດ້ແຫ່ງຊາດ (GNI) ສະເລ່ຍຕໍ່ຫົວຄົນເທົ່າກັບ 2.358 ໂດລາສະຫະລັດ, ໂຄງປະກອບເສດຖະກິດແຫ່ງຊາດ ໃນປີ 2022 ຄາດວ່າຈະກວມ ໃນອັດຕາສ່ວນ ດັ່ງນີ້:

- ຂະແໜງກະສິກຳ ເພີ່ມຂຶ້ນ 2,7% ກວມເອົາ 16,7% ຂອງ GDP;
- ຂະແໜງອຸດສາຫະກຳ ເພີ່ມຂຶ້ນ 5,3% ກວມເອົາ 34,0% ຂອງ GDP;
- ຂະແໜງການບໍລິການ ເພີ່ມຂຶ້ນ 4,5% ກວມເອົາ 38,9% ຂອງ GDP;
- ພາສີ-ອາກອນ ເພີ່ມຂຶ້ນ 4,0% ກວມເອົາ 10,4% ຂອງ GDP.

**1.2 ດ້ານເງິນຕາ**

1) ປະລິມານເງິນ $M_2$ ເພີ່ມຂຶ້ນໃນລະດັບບໍ່ເກີນ 22%;
2) ອັດຕາເງິນເຟີ້ໃຫ້ຢູ່ໃນລະດັບ ບໍ່ເກີນ 5%, ອັດຕາແລກປ່ຽນເໜັງຕີງໃນກອບ $\pm 5\%$ ທຽບໃສ່ເງິນໂດລາສະຫະລັດ;

3) ຄັງສຳຮອງເງິນຕາຕ່າງປະເທດໃຫ້ກຸ້ມການນຳເຂົ້າ ບໍ່ໃຫ້ຫຼຸດ 3 ເດືອນ;
4) ລະດັບເງິນຝາກໃນທົ່ວລະບົບທະນາຄານທຸລະກິດ ບັນລຸໄດ້ລະດັບ 70% ຂອງ GDP ແລະ ຊຸກຍູ້ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ ໃຫ້ຢູ່ໃນລະດັບ 50% ຂອງ GDP;
5) ຄວບຄຸມອັດຕາສ່ວນໜີ້ທີ່ບໍ່ເກີດດອກອອກຜົນ (NPL) ບໍ່ໃຫ້ເກີນ 3% ຂອງຍອດສິນເຊື່ອທັງໝົດ.

### 1.3 ດ້ານງົບປະມານ

1) **ດ້ານລາຍຮັບ:** ຄາດໝາຍລາຍຮັບງົບປະມານທັງໝົດໃຫ້ໄດ້ ຈຳນວນ 31.593 ຕື້ກີບ, ເທົ່າກັບ 16,44% ຂອງ GDP, ເພີ່ມຂຶ້ນ 14,35% ທຽບໃສ່ມະຕິ ປີ 2021;
2) **ດ້ານລາຍຈ່າຍ:** ຄາດໝາຍລາຍຈ່າຍງົບປະມານ ແມ່ນອີງໃສ່ແຫຼ່ງລາຍຮັບງົບປະມານເປັນຫຼັກ ເພື່ອຫຼຸດຜ່ອນການຂາດດຸນງົບປະມານ, ຄາດຄະເນລາຍຈ່າຍທັງໝົດຈະຢູ່ໃນລະດັບ 34.691 ຕື້ກີບ, ເທົ່າກັບ 18,05% ຂອງ GDP, ເພີ່ມຂຶ້ນ 9,84% ທຽບໃສ່ມະຕິ ປີ 2021;
3) **ຂາດດຸນງົບປະມານ:** ຄາດຄະເນການຂາດດຸນງົບປະມານ 3.098 ຕື້ກີບ, ເທົ່າກັບ 1,61% ຂອງ GDP, ຫຼຸດລົງ 21,67 ທຽບໃສ່ ປີ 2021 (ມູນຄ່າ GDP ເທົ່າກັບ 192.145 ຕື້ກີບ).

### 1.4 ການດຸ່ນດ່ຽງຂາອອກ-ຂາເຂົ້າ

1) ມູນຄ່າສົ່ງອອກ ໃຫ້ບັນລຸ 7.600 ລ້ານໂດລາສະຫະລັດ, ເພີ່ມຂຶ້ນ 4,11% ຈາກປີ 2021;
2) ມູນຄ່າການນຳເຂົ້າ ປະມານ 6.050 ລ້ານໂດລາສະຫະລັດ, ເພີ່ມຂຶ້ນ 8,04% ຈາກປີ 2021.

### 1.5 ດ້ານແຫຼ່ງທຶນເພື່ອການພັດທະນາ

ຄວາມຕ້ອງການທຶນລວມທັງໝົດ 43.950 ຕື້ກີບ ເພີ່ມຂຶ້ນ 41,31% ທຽບໃສ່ແຜນປີຜ່ານມາ ( 31.100 ຕື້ກີບ), ເທົ່າກັບ 22,87% ຂອງ GDP ໃນນີ້:

1) ການລົງທຶນຂອງລັດ ທັງໝົດ 10.700 ຕື້ກີບ, ຫຼຸດລົງ 3,60%, ເທົ່າກັບ 24,34% ຂອງການລົງທຶນລວມ ແລະ ເທົ່າກັບ 5,56% ຂອງ GDP ໃນນັ້ນ:
- ງົບປະມານການລົງທຶນພາຍໃນ 3.950 ຕື້ກີບ, ເພີ່ມຂຶ້ນ 1,28% ທຽບໃສ່ແຜນປີ 2021, ເທົ່າກັບ 8,99% ຂອງມູນຄ່າການລົງທຶນຂອງລັດທັງໝົດ ແລະ ເທົ່າກັບ 2,05% ຂອງ GDP;
- ທຶນຊ່ວຍເຫຼືອເພື່ອການພັດທະນາ (ODA) ເປັນໂຄງການ 6.750 ຕື້ກີບ, ຫຼຸດລົງ 6,25%, ເທົ່າກັບ 15,36% ຂອງມູນຄ່າການລົງທຶນຂອງລັດທັງໝົດ ແລະ ເທົ່າກັບ 3,51% ຂອງ GDP ໃນນີ້:
  + ທຶນຊ່ວຍເຫຼືອລ້າທາງການເພື່ອການພັດທະນາ 2.460 ຕື້ກີບ;
  + ທຶນກູ້ຢືມ 4.290 ຕື້ກີບ.

2) ການລົງທຶນເອກະຊົນ ພາຍໃນ ແລະ ຕ່າງປະເທດ 29.420 ຕື້ກີບ, ເພີ່ມຂຶ້ນ 47,1%, ເທົ່າກັບ 66,93% ຂອງມູນຄ່າການລົງທຶນລວມທັງໝົດ ແລະ ເທົ່າກັບ 15,31% ຂອງ GDP;
3) ການລົງທຶນຈາກແຫຼ່ງອື່ນໆ (ການລົງທຶນຈາກຊຸມຊົນ) 3.830 ຕື້ກີບ, ເທົ່າກັບ 8,71% ຂອງມູນຄ່າການລົງທຶນລວມທັງໝົດ ແລະ ເທົ່າກັບ 1,99% ຂອງ GDP.

## 2. ຄາດໝາຍແຜນການເສດຖະກິດ

1) ຜະລິດເຂົ້າເປືອກລວມ ໃຫ້ໄດ້ 3,7 ລ້ານໂຕນ, ເພີ່ມຂຶ້ນ 1,09% ຈາກປີ 2021; ຜະລິດພືດສະບຽງອາຫານ ໃຫ້ໄດ້ 3,3 ລ້ານໂຕນ, ເພີ່ມຂຶ້ນ 12,19% ຈາກປີ 2021; ການຜະລິດຊີ້ນ, ໄຂ່ ແລະ ປາ ໃຫ້ໄດ້ 508.700 ໂຕນ, ເພີ່ມຂຶ້ນ 4,67% ຈາກປີ 2021; ມູນຄ່າການສົ່ງອອກຜະລິດຕະພັນດ້ານກະສິກຳ ໃຫ້ໄດ້ໃນລະດັບ 1.200 ລ້ານໂດລາສະຫະລັດ, ໃນນັ້ນ: ດ້ານການປູກຝັງ 1.100 ລ້ານໂດລາສະຫະລັດ ແລະ ດ້ານລ້ຽງສັດ 100 ລ້ານໂດລາສະຫະລັດ;
2) ສ້າງມູນຄ່າການຜະລິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ບັນລຸ 13.007 ຕື້ກີບ, ເພີ່ມຂຶ້ນ 9,49% ຈາກປີ 2021;
3) ສ້າງມູນຄ່າການຈໍລະຈອນສິນຄ້າ (ຂາຍຍົກ-ຂາຍຍ່ອຍ ແລະ ບໍລິການ) ໃຫ້ບັນລຸ 67.833 ຕື້ກີບ, ເພີ່ມຂຶ້ນ 11,07% ຈາກປີ 2021;
4) ຜະລິດກະແສໄຟຟ້າ ໃຫ້ໄດ້ 44.827 ລ້ານກິໂລວັດໂມງ ເປັນມູນຄ່າ 23.509 ຕື້ກີບ, ເພີ່ມຂຶ້ນ 6,65%, ໃນນັ້ນ ສົ່ງອອກໄປຕ່າງປະເທດ 34.903 ລ້ານກິໂລວັດໂມງ, ເປັນມູນຄ່າ 2.050 ລ້ານໂດລາສະຫະລັດ ເພີ່ມຂຶ້ນ 2,97% ແລະ ຈຳໜ່າຍພາຍໃນປະເທດ 9.162,60 ລ້ານກິໂລວັດໂມງ, ເປັນມູນຄ່າ 774 ລ້ານໂດລາສະຫະລັດ, ຫຼຸດລົງ 0,1%;
5) ມູນຄ່າການຜະລິດແຮ່ທາດ ໃຫ້ໄດ້ 16.741 ຕື້ກີບ, ເພີ່ມຂຶ້ນ 5,36%, ໃນນັ້ນ ມູນຄ່າການຈຳໜ່າຍແຮ່ທາດໄປຕ່າງປະເທດ ໃຫ້ໄດ້ 1.546 ລ້ານໂດລາສະຫະລັດ, ຫຼຸດລົງ 2% ແລະ ມູນຄ່າການຈຳໜ່າຍແຮ່ທາດພາຍໃນປະເທດ ໃຫ້ໄດ້ 350 ລ້ານໂດລາສະຫະລັດ, ເພີ່ມຂຶ້ນ 0,5%;
6) ການບໍລິການຂົນສົ່ງສິນຄ້າ ໃຫ້ໄດ້ 5.558.000 ໂຕນ, ເພີ່ມ 7% ແລະ ຂົນສົ່ງໂດຍສານ ໃຫ້ໄດ້ 68.779.000 ເທື່ອຄົນ, ເພີ່ມຂຶ້ນ 7%.

## 3. ຄາດໝາຍດ້ານວັດທະນະທຳ-ສັງຄົມ

### 3.1. ຄາດໝາຍແຜນງານສຶກສາທິການ ແລະ ກິລາ

1) ອັດຕາເຂົ້າຮຽນຂອງເດັກ 5 ປີ ໃນຊັ້ນການສຶກສາກ່ອນໄວຮຽນສະເລ່ຍໃນທົ່ວປະເທດ ໃຫ້ໄດ້ 83% ຂຶ້ນໄປ;
2) ອັດຕານັກຮຽນເຂົ້າໃໝ່ ປ.1 ທຽບໃສ່ເດັກ 6 ປີ ໃຫ້ບັນລຸ 98,6% ຂຶ້ນໄປ;
3) ອັດຕາເຂົ້າຮຽນໃໝ່ລວມ ປ.5 ໃຫ້ບັນລຸ 97,4% ຂຶ້ນໄປ;
4) ອັດຕາປະລະການຮຽນຂອງນັກຮຽນ ປ.1 ໃຫ້ຫຼຸດຕ່ຳກວ່າ 5,3%;
5) ອັດຕາຈົບຊັ້ນປະຖົມສຶກສາ ໃຫ້ໄດ້ 92,2% ຂຶ້ນໄປ;
6) ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ໃຫ້ບັນລຸ 85% ຂຶ້ນໄປ;
7) ອັດຕາປະລະການຮຽນຂອງນັກຮຽນຊັ້ນປະຖົມ ໃຫ້ຫຼຸດຕ່ຳກວ່າ 4%;
8) ດັດຊະນີຄວາມສະເໝີພາບຍິງ-ຊາຍ ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ໃຫ້ບັນລຸໄດ້ ລະຫວ່າງ 0,99 (ໃຫ້ບັນລຸໄດ້ 0,97-1,03);
9) ອັດຕາເຂົ້າຮຽນໃໝ່ລວມ ມ.4 ບໍ່ໃຫ້ຫຼຸດ 70%;
10) ອັດຕາປະລະການຮຽນຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ບໍ່ໃຫ້ເກີນ 10%;
11) ປະຊາກອນໜຸ່ມ, ຜູ້ປະລະການຮຽນ ໃຫ້ໄດ້ບຳລຸງ ຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ ໃຫ້ໄດ້ 30.000 ຄົນ;

12) ຄູຊັ້ນປະຖົມ ແລະ ມັດທະຍົມສຶກສາໃຫ້ໄດ້ຮັບການຝຶກອົບຮົມບໍ່ໃຫ້ຫຼຸດ 10% ຂອງຈຳນວນຄູທັງໝົດ;

13) ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນ ໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ບໍ່ໃຫ້ຫຼຸດ 3.5%;

14) ສົ່ງເສີມໃຫ້ນັກສຶກສາທີ່ສະໝັກເຂົ້າຮຽນລະດັບມະຫາວິທະຍາໄລໄດ້ເຂົ້າຮຽນໃນສາຍວິທະຍາສາດທຳມະຊາດ, ເທັກໂນໂລຊີ, ວິສະວະກຳ ແລະ ຄະນິດສາດ ໃຫ້ໄດ້ 2.500 ຄົນ;

15) ສົ່ງເສີມມວນຊົນທຸກເພດ, ທຸກໄວໄດ້ເຂົ້າຮ່ວມການຫັດກາຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາກາຍະກຳ ໃຫ້ໄດ້ 33% ຂອງພົນລະເມືອງ.

### 3.2. ຄາດໝາຍຂະແໜງສາທາລະນະສຸກ

1) ອັດຕາສ່ວນເດັກນ້ອຍລຸ່ມ 05 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານໃຫ້ຫຼຸດລົງ ຍັງເຫຼືອ 18% ຂອງປະຊາກອນກຸ່ມເປົ້າໝາຍ;

2) ອັດຕາສ່ວນເດັກນ້ອຍລຸ່ມ 05 ປີ ທີ່ມີລວງສູງຕ່ຳກວ່າມາດຕະຖານໃຫ້ຫຼຸດລົງ ຍັງເຫຼືອ 30% ຂອງປະຊາກອນກຸ່ມເປົ້າໝາຍ;

3) ອັດຕາການຕາຍຂອງເດັກລຸ່ມ 01 ປີ ໃຫ້ຫຼຸດລົງ ຍັງເຫຼືອ 26/1.000 ຂອງເດັກນ້ອຍເກີດມີຊີວິດ;

4) ອັດຕາການຕາຍຂອງເດັກລຸ່ມ 05 ປີ ໃຫ້ຫຼຸດລົງ ຍັງເຫຼືອ 36/1.000 ຂອງເດັກນ້ອຍເກີດມີຊີວິດ;

5) ອັດຕາສ່ວນການຕາຍຂອງແມ່ໃຫ້ຫຼຸດລົງ ຍັງເຫຼືອ 140/100.000 ຂອງເດັກນ້ອຍເກີດມີຊີວິດ;

6) ອັດຕາການເກີດລູກມີແພດຊ່ວຍໃຫ້ເພີ່ມຂຶ້ນເປັນ 82% ຂອງປະຊາກອນກຸ່ມເປົ້າໝາຍ;

7) ອັດຕາການໃຫ້ວັກຊິນກັນພະຍາດໃຫ້ເພີ່ມຂຶ້ນເປັນ 95% ຂອງປະຊາກອນກຸ່ມເປົ້າໝາຍ;

8) ການຊົມໃຊ້ນ້ຳສະອາດໃຫ້ເພີ່ມຂຶ້ນເປັນ 92% ຂອງປະຊາກອນທັງໝົດ;

9) ການຊົມໃຊ້ວິດຖ່າຍໃຫ້ເພີ່ມຂຶ້ນເປັນ 82% ຂອງຈຳນວນຄອບຄົວທັງໝົດ;

10) ອັດຕາການປົກຄຸມປະກັນສຸຂະພາບທົ່ວປວງຊົນໃຫ້ປະຕິບັດໄດ້ 94,5% ຂອງປະຊາກອນກຸ່ມເປົ້າໝາຍ;

11) ປະກາດຮັບຮອງບ້ານສາທາລະນະສຸກແບບຢ່າງ ໃຫ້ໄດ້ 82% ຂອງຈຳນວນບ້ານທັງໝົດ.

### 3.3. ຄາດໝາຍຂະແໜງແຮງງານ ແລະ ສະຫວັດດີການ-ສັງຄົມ

1) ພັດທະນາສີມືແຮງງານ ໃຫ້ໄດ້ 8.000 ຄົນ ເພື່ອສະໜອງແຮງງານໃຫ້ເຂດເສດຖະກິດພິເສດ, ນິຄົມອຸດສາຫະກຳ, ບໍລິສັດ, ໂຮງງານ ແລະ ໂຄງການລົງທຶນຕ່າງໆ;

2) ຈັດຫາວຽກເຮັດງານທຳໃຫ້ເຂົ້າສູ່ຕະຫຼາດແຮງງານພາຍໃນ ແລະ ຕ່າງປະເທດ ລວມທັງຜູ້ປະກອບອາຊີບອິດສະຫຼະ ໂດຍຕິດພັນກັບວາລະແຫ່ງຊາດ ໃຫ້ໄດ້ 54.500 ຄົນ, ແກ້ໄຂບັນຫາຫວ່າງງານໃຫ້ຫຼຸດລົງ 19,4%;

3) ຂະຫຍາຍອັດຕາການປົກຄຸມປະກັນສັງຄົມ ໃຫ້ໄດ້ 31.500 ຄົນ, ໃນນີ້ ພາກລັດ 1.500 ຄົນ, ພາກວິສາຫະກິດ 27.000 ຄົນ ແລະ ຜູ້ສະໝັກໃຈ 3.000 ຄົນ;

4) ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດຊາດປະຊາທິປະໄຕ ໃຫ້ໄດ້ 4.316 ທ່ານ ເປັນເງິນ 83.383.649.907 ກີບ, ໃນນີ້ 5 ເປົ້າໝາຍບູລິມະສິດ ໃຫ້ໄດ້ 4.116 ທ່ານ ເປັນເງິນ 77.383.649.907 ແລະ ເປົ້າໝາຍທົ່ວໄປ ໃຫ້ໄດ້ 200 ທ່ານ ເປັນເງິນ 6.000.000.000 ກີບ;

5) ສ້າງກອງທຶນຄຸ້ມຄອງໄພພິບັດ ໃຫ້ໄດ້ 16 ແຫ່ງ, ໃນນີ້ ຂັ້ນແຂວງ 3 ແຫ່ງ ແລະ ຂັ້ນເມືອງ 13 ແຫ່ງ;

6) ກວດກູ້ລະເບີດບໍ່ທັນແຕກອອກຈາກເນື້ອທີ່ທຳການຜະລິດ, ເຂດຊຸມຊົນ ແລະ ເຂດຈຸດສຸມທຸລະກິດ ໃຫ້ໄດ້ 10.000 ເຮັກຕາ, ຫຼຸດຜ່ອນຜູ້ບາດເຈັບ ແລະ ເສຍຊີວິດຈາກລະເບີດບໍ່ທັນແຕກ ໃຫ້ຕ່ຳກວ່າ 40 ຄົນ;

7) ປູກລະດົມ ແລະ ຮັບບໍລິຈາກເລືອດໃຫ້ໄດ້ 64.000 ຖົງ, ໃນນີ້ ສູນເລືອດແຫ່ງຊາດ 26.310 ຖົງ ແລະ ທ້ອງຖິ່ນຕ່າງໆ 37.690 ຖົງ.

### 3.4. ຄາດໝາຍຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

1) ຂະຫຍາຍສະຖານີວິທະຍຸກະຈາຍສຽງຂັ້ນເມືອງ ໃຫ້ໄດ້ 2 ແຫ່ງ ແລະ ຂະຫຍາຍລະບົບໄທລະໂຄ່ງຢູ່ຂັ້ນບ້ານ ໃຫ້ໄດ້ 250 ຊຸດ;

2) ສ້າງຄອບຄົວວັດທະນະທຳ ໃຫ້ໄດ້ 26.000 ຄອບຄົວ ແລະ ສ້າງບ້ານວັດທະນະທຳ ໃຫ້ໄດ້ 150 ບ້ານ;

3) ສ້າງເອກະສານສະເໜີມໍລະດົກທຳມະຊາດຫີນໜາມໜໍ່ ແຂວງຄຳມ່ວນ ເຂົ້າເປັນມໍລະດົກໂລກ;

4) ສຳຫຼວດແຫຼ່ງບູຮານວິທະຍາ ໃຫ້ໄດ້ 7 ແຫ່ງ ແລະ ຂຸດຄົ້ນ ໃຫ້ໄດ້ 1 ແຫ່ງ, ຂຶ້ນທະບຽນບັນຊີວັດຖຸບູຮານ ແລະ ພະພຸດທະຮູບ ໃຫ້ໄດ້ 1 ແຫ່ງ; ຂຶ້ນບັນຊີມໍລະດົກວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ຈາກລະດັບທ້ອງຖິ່ນໃຫ້ເປັນລະດັບຊາດ ໃຫ້ໄດ້ 4 ແຫ່ງ ແລະ ຂຶ້ນບັນຊີວັດຖຸບູຮານ ແລະ ພະພຸດທະສີມມາ ໃຫ້ໄດ້ 1 ແຫ່ງ;

5) ດຶງດູດນັກທ່ອງທ່ຽວທັງພາຍໃນ "ລາວທ່ຽວລາວ" ແລະ ນັກທ່ອງທ່ຽວຕ່າງປະເທດ ໃຫ້ໄດ້ 1.966.000 ເທື່ອຄົນ ໃນນີ້, ນັກທ່ອງທ່ຽວພາຍໃນ ໃຫ້ໄດ້ 1.066.000 ເທື່ອຄົນ, ນັກທ່ອງທ່ຽວຕ່າງປະເທດ 900.000 ເທື່ອຄົນ ແລະ ສ້າງລາຍຮັບ ໃຫ້ໄດ້ 301.198.439 ໂດລາສະຫະລັດ;

6) ສຳຫຼວດ, ຈັດສັນກຳນົດຂອບເຂດ, ປັກຫຼັກໝາຍ ແລະ ອອກໃບຢັ້ງຢືນຂອບເຂດແຫຼ່ງທ່ອງທ່ຽວໃຫ້ໄດ້ 5 ແຫ່ງ.

## 4. ຄາດໝາຍດ້ານການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ

1) ສ້າງຄອບຄົວພົ້ນທຸກ ໃຫ້ໄດ້ 30.654 ຄອບຄົວ, ເທົ່າກັບ 11,12% ຂອງຄອບຄົວບໍ່ທັນພົ້ນທຸກທັງໝົດ ຈຳນວນ 275.553 ຄອບຄົວ;

2) ສ້າງບ້ານພົ້ນທຸກ ໃຫ້ໄດ້ 466 ບ້ານ, ເທົ່າກັບ 12,82% ຂອງບ້ານບໍ່ພົ້ນທຸກ ຈຳນວນ 3.634 ບ້ານ;

3) ສ້າງເມືອງພົ້ນທຸກໃຫ້ໄດ້ 12 ເມືອງ (ໃນນີ້ສືບຕໍ່ສ້າງ ເມືອງຊ່ອນ ແຂວງຫົວພັນ, ເມືອງນອງ ແຂວງສະຫວັນນະເຂດ, ເມືອງ ທ່າໂທມ ແຂວງໄຊສົມບູນ ແລະ ເມືອງຄູນຄຳ ແຂວງຄຳມ່ວນ ແລະ ສູ້ຊົນສ້າງເພີ່ມໃໝ່ ໃຫ້ໄດ້ 8 ເມືອງ) ເທົ່າກັບ 8,10% ຂອງຈຳນວນ 148 ເມືອງທັງໝົດທົ່ວປະເທດ;

4) ສ້າງຄອບຄົວພັດທະນາໃຫ້ໄດ້ 26.859 ຄອບຄົວ, ເພີ່ມຂຶ້ນເປັນ 788.427 ຄອບຄົວ, ເທົ່າກັບ 61,43% ຂອງຈຳນວນຄອບຄົວທັງໝົດທົ່ວປະເທດ 1.239.702;

5) ສ້າງບ້ານພັດທະນາໃຫ້ໄດ້ 663 ບ້ານ ເພີ່ມຂຶ້ນເປັນ 1.852 ບ້ານ ເທົ່າກັບ 14,11% ຂອງຈຳນວນບ້ານທັງໝົດທົ່ວປະເທດ 8.426 ບ້ານ;

6) ສ້າງຕົວແບບບ້ານໃຫຍ່ກາຍເປັນຕົວເມືອງນ້ອຍໃນຊົນນະບົດ ໃຫ້ໄດ້ 3 ບ້ານ ເພີ່ມຂຶ້ນເປັນ 19 ບ້ານ;

7) ສ້າງເມືອງເຂັ້ມແຂງຮອບດ້ານ ໃຫ້ໄດ້ 4 ເມືອງ ລວມເປັນ 9 ເມືອງ;

8) ຂະຫຍາຍກອງທຶນພັດທະນາບ້ານ ບ້ວງ 500 ລ້ານກີບ ໃຫ້ໄດ້ 12 ບ້ານ.

**5. ຄາດໝາຍດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

1) ຂຶ້ນທະບຽນ ອອກໃບຕາດິນ ໃຫ້ໄດ້ 300.000 ຕອນ;
2) ສືບຕໍ່ຊຸກຍູ້ ສ້າງແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ຂັ້ນແຂວງ ໃຫ້ສຳເລັດ ໃນຂອບເຂດທົ່ວປະເທດ;
3) ສືບຕໍ່ ສ້າງແຜນການຄຸ້ມຄອງອ່າງຮັບນ້ຳຂະໜາດໃຫຍ່ 04 ອ່າງ ແລະ ອ່າງຮັບນ້ຳຫຼັກຂອງແຂວງ ໃນຂອບເຂດທົ່ວປະເທດ ໃຫ້ສຳເລັດ;
4) ສືບຕໍ່ ສ້າງສະຖານີອຸຕຸນິຍົມໃໝ່ 25 ແຫ່ງ, ສະຖານີອຸທົກກະສາດ 10 ແຫ່ງ ແລະ ສະຖານີວັດແທກຄຸນນະພາບອາກາດ ຢ່າງໜ້ອຍໃຫ້ໄດ້ 04 ສະຖານີ ໃນທົ່ວປະເທດ;
5) ສືບຕໍ່ ແຜນງານແຫ່ງຊາດ ກ່ຽວກັບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໃຫ້ສຳເລັດ.

**ມາດຕາ 3 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດປະຈຳປີ 2022**

ກອງປະຊຸມເຫັນດີເປັນເອກະພາບຮັບຮອງເອົາ 5 ມາດຕະການ ແລະ 4 ກົນໄກຈັດຕັ້ງປະຕິບັດ ຕາມການສະເໜີຂອງລັດຖະບານ.

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານປະຈຳປີ 2022 ບັນລຸຕາມຄາດໝາຍທີ່ວາງໄວ້, ກອງປະຊຸມສະເໜີໃຫ້ລັດຖະບານ ເອົາໃຈໃສ່ຈັດຕັ້ງປະຕິບັດບາງມາດຕະການ ດັ່ງນີ້:

1) ກຳນົດນະໂຍບາຍ ແລະ ມາດຕະການກະຕຸ້ນເສດຖະກິດທີ່ຈະແຈ້ງ ເພື່ອສົ່ງເສີມຂະແໜງການຜະລິດ ແລະ ການບໍລິການທີ່ມີທ່າແຮງໄດ້ປຽບແທ້ ແລະ ມີຕະຫຼາດຮອງຮັບຢູ່ຕະຫຼາດພາຍໃນ ແລະ ຕ່າງປະເທດທີ່ແນ່ນອນ, ລົງທຶນໄລຍະສັ້ນ ໄດ້ຮັບຜົນໄວ, ຕິດພັນກັບການນຳໃຊ້ເສັ້ນທາງລົດໄຟ ເລີ່ມແຕ່ ປີ 2022 ໃຫ້ເກີດປະໂຫຍດສູງສຸດ;
2) ກຳນົດແຜນການນຳໃຊ້ບໍລິມາດເງິນ M2 ທີ່ເພີ່ມຂຶ້ນໃນລະດັບສູງນັ້ນໃຫ້ສາມາດຕອບສະໜອງຄວາມຕ້ອງການແຜນພັດທະນາຂອງຂະແໜງການ ແລະ ເປົ້າໝາຍການນຳໃຊ້ອື່ນໆໃຫ້ມີປະສິດຕິຜົນ ແລະ ປະສິດທິຜົນສູງ ຮັບປະກັນການກະຕຸ້ນການເຕີບໂຕເສດຖະກິດ ໄປຄຽງຄູ່ກັບການຮັບປະກັນສະຖຽນລະພາບເສດຖະກິດມະຫາພາກໃຫ້ມີຄວາມໝັ້ນທ່ຽງເປັນຕົ້ນແມ່ນອັດຕາເງິນເຟີ້ ໃຫ້ຢູ່ໃນລະດັບຕາມແຜນທີ່ໄດ້ກຳນົດ;
3) ທະນາຄານແຫ່ງ ສປປ ລາວ ສົມທົບກັບ ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການກ່ຽວຂ້ອງ ຄົ້ນຄວ້າ ແລະ ສະເໜີມາດຕະການແກ້ໄຂບັນຫາເງິນເຟີ້ ໃຫ້ສອດຄ່ອງກັບສະພາບເສດຖະກິດຕົວຈິງ ເປັນຕົ້ນແມ່ນ ລາຄານ້ຳມັນ, ລາຄາໄຟຟ້າ, ອັດຕາແລກປ່ຽນ ແລະ ການຄວບຄຸມລາຄາສິນຄ້າພາຍໃນ ແລະ ສິນຄ້ານຳເຂົ້າ ທີ່ມີຄວາມຈຳເປັນສຳລັບຊີວິດປະຈຳວັນ ເພື່ອບໍ່ໃຫ້ກະທົບຕໍ່ຄ່າຄອງຊີບຂອງປະຊາຊົນຫຼາຍ;
4) ທະນາຄານແຫ່ງ ສປປ ລາວ ຄົ້ນຄວ້ານະໂຍບາຍກຳນົດອັດຕາດອກເບ້ຍສິນເຊື່ອທີ່ສົ່ງເສີມ, ພ້ອມທັງ ການຊ່ວຍເຫຼືອທາງດ້ານວິຊາການ ເພື່ອກະຕຸ້ນພາກທຸລະກິດ ເປັນຕົ້ນແມ່ນ ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ, ກຸ່ມຜະລິດ, ສະຫະກອນ, ທຸລະກິດເກີດຂຶ້ນໃໝ່ (start up) ໃຫ້ຂະຫຍາຍຕົວ, ມີປະສິດທິຜົນ ແລະ ຫຼຸດຜ່ອນໜີ້ບໍ່ເກີດດອກອອກຜົນ (NPL);

5) ທະນາຄານແຫ່ງ ສປປ ລາວ ເອົາໃຈໃສ່ຄົ້ນຄວ້າສ້າງແຜນຄຸ້ມຄອງກະແສເງິນຕາຕ່າງປະເທດ ເຂົ້າ-ອອກ ສປປ ລາວ ຕິດພັນກັບການລົງທຶນ, ການຄ້າ ແລະ ລາຍຮັບລະຫວ່າງປະເທດ ເພື່ອສ້າງຄັງສຳຮອງເງິນຕາຕ່າງປະເທດໃຫ້ເຂັ້ມແຂງ;

6) ສືບຕໍ່ປັບປຸງບັນດາທະນາຄານທຸລະກິດລັດ ແລະ ວິສາຫະກິດລັດ ທີ່ດຳເນີນທຸລະກິດຂາດທຶນຕໍ່ເນື່ອງ ເປັນເວລາຫຼາຍປີ ດ້ວຍການປະຕິຮູບໂຄງສ້າງການຈັດຕັ້ງ ແລະ ການເຄື່ອນໄຫວທຸລະກິດໃຫ້ເໝາະສົມ ແລ້ວໃຫ້ລາຍງານຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ເພື່ອພິຈາລະນາຮັບຮອງ;

7) ກະຊວງການເງິນ ເອົາໃຈໃສ່ປະຕິບັດແຜນງົບປະມານທີ່ຕິດພັນກັບວາລະແຫ່ງຊາດ ກ່ຽວກັບການແກ້ໄຂຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເປັນຕົ້ນແມ່ນ ການປະຕິບັດມາດຕະການ ແລະ ຄົ້ນຄວ້າມາດຕະການໃໝ່ເພື່ອຮັບປະກັນການບັນລຸບັນດາຄາດໝາຍທີ່ໄດ້ກຳນົດ, ພິເສດແມ່ນການສ້າງແຜນຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດ ໃຫ້ໄປຕາມກຳນົດເວລາການຊຳລະໜີ້ສິນ, ມີຄວາມຈະແຈ້ງ ເພື່ອຮັບປະກັນຄວາມໝັ້ນທ່ຽງຂອງງົບປະມານແຫ່ງລັດ ແລະ ສ້າງຄວາມໜ້າເຊື່ອຖືແກ່ສາກົນ;

8) ອອກນິຕິກຳຄຸ້ມຄອງທີ່ເຂັ້ມງວດ ແລະ ຈະແຈ້ງ ເພື່ອຄຸ້ມຄອງການດຳເນີນທຸລະກິດກ່ຽວກັບຊັບສິນດິຈິຕອນ ໃນໄລຍະເຮັດທົດລອງ, ດ້ວຍການຄົ້ນຄວ້າຄາດຄະເນຜົນໄດ້, ຜົນເສຍ ຂອງທຸລະກິດດັ່ງກ່າວ ໃຫ້ມີຄວາມລະອຽດ, ຖືກຕ້ອງຕາມກົດໝາຍ ແລະ ສາມາດຖອດຖອນເປັນບົດຮຽນໃນການຄຸ້ມຄອງຢ່າງມີປະສິດທິຜົນ;

9) ຊຸກຍູ້ສົ່ງເສີມການຜະລິດສະບຽງອາຫານຢ່າງແຂງແຮງ ເພື່ອຕອບສະໜອງໃຫ້ແກ່ຕະຫຼາດການທ່ອງທ່ຽວ ພາຍຫຼັງການເປີດການນຳໃຊ້ລົດໄຟລາວ-ຈີນ ຢ່າງເປັນທາງການ; ຍູ້ແຮງການຜະລິດພາຍໃນ ເພື່ອທົດແທນການນຳເຂົ້າ, ພ້ອມທັງຊຸກຍູ້ສົ່ງເສີມອຸດສາຫະກຳປຸງແຕ່ງກະສິກຳ ດ້ວຍການຫັນເປັນທັນສະໄໝ; ສູ້ຊົນປະຕິບັດສັນຍາການຄ້າກັບບັນດາປະເທດໃນຂົງເຂດ ແລະ ໃນໂລກ ເປັນຕົ້ນກັບ ສປ. ຈີນ ໃຫ້ປະກົດຜົນເປັນຈິງ ໂດຍສະເພາະ ແມ່ນການສົ່ງອອກເຂົ້າ, ຊີ້ນ ແລະ ພືດຕ່າງໆ ໃຫ້ບັນລຸໄດ້ຕາມສັນຍາທີ່ໄດ້ຕົກລົງກັນ;

10) ການພັດທະນາຂະແໜງອຸດສາຫະກຳ ໃຫ້ເອົາໃຈໃສ່ແກ້ໄຂຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ໃຫ້ເຂັ້ມງວດ ແລະ ຮັບປະກັນຄວາມຍືນຍົງ; ຄົ້ນຄວ້ານຳໃຊ້ພາຫະນະຂົນສົ່ງ ທີ່ເປັນມິດກັບສິ່ງແວດລ້ອມ ລວມທັງການນຳໃຊ້ລົດໄຟຟ້າ ໃນຕົວເມືອງໃຫຍ່ ທີ່ມີເງື່ອນໄຂ ໃຫ້ຫຼາຍຂຶ້ນເພື່ອຫຼຸດຜ່ອນການນຳເຂົ້ານ້ຳມັນເຊື້ອໄຟ;

11) ພິຈາລະນາປັບໂຄງປະກອບການຈັດສັນງົບປະມານການລົງທຶນເຂົ້າໃນຂົງເຂດເສດຖະກິດ ແລະ ຂົງເຂດວັດທະນະທຳ-ສັງຄົມ ຢ່າງເໝາະສົມ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດບັນດາຄາດໝາຍທີ່ກຳນົດໄວ້;

12) ສືບຕໍ່ຄົ້ນຄວ້າມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ພະຍາດຕາມລະດູການ ໃຫ້ທັນການ ແລະ ທົ່ວເຖິງ ສະເໜີລັດຖະບານເອົາໃຈໃສ່ ດັ່ງນີ້:
   - ຮີບຮ້ອນຈັດຫາວັກຊີນທີ່ມີຄຸນນະພາບ ແລະ ຈັດຕັ້ງການສັກວັກຊີນໃຫ້ປະຊາຊົນ ໃຫ້ກວມເອົາ 80% ຂຶ້ນໄປ ໂດຍສະເພາະ ນັກຮຽນຊັ້ນປະຖົມຂຶ້ນໄປ, ນັກສຶກສາ ແລະ ຄົ້ນຄວ້າການສັກວັກຊີນໃຫ້ເດັກກ່ອນໄວຮຽນ;
   - ກຳນົດນະໂຍບາຍ ແລະ ມາດຕະການລະອຽດກ່ຽວກັບແຜນການເປີດການທ່ອງທ່ຽວທີ່ປອດໄພຈາກໂຄວິດ-19 ຢູ່ ສປປ ລາວ ແລະ ລວມທັງການຫັນປ່ຽນວິຖີຊີວິດປົກກະຕິແບບໃໝ່ (New Normal);
   - ຄົ້ນຄວ້າມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ພະຍາດຕາມລະດູການ ໃຫ້ທັນການ ທົ່ວເຖິງ;
   - ຊຸກຍູ້ການຄົ້ນຄວ້າ ແລະ ນຳໃຊ້ຢາພື້ນເມືອງເຂົ້າໃນການປິ່ນປົວສຸຂະພາບ;

- ປະຕິບັດນະໂຍບາຍທີ່ເໝາະສົມໃຫ້ແກ່ນັກຮຽນເສື່ອຂາວ ແລະ ຜູ້ເຮັດໜ້າທີ່ປະເຊີນໜ້າໂດຍກົງກັບການລະບາດຂອງພະຍາດໂຄວິດ-19;
- ມີນະໂຍບາຍສົ່ງເສີມໃຫ້ທຸກພາກສ່ວນ ໃນສັງຄົມ ລວມທັງພາກເອກະຊົນ ມີສ່ວນຮ່ວມໃນການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19;
- ຄົ້ນຄວ້າສ້າງຍຸດທະສາດທັນການສຶກສາເປັນດິຈິຕອນ; ກຳນົດນະໂຍບາຍ ແລະ ມາດຕະການ ເພື່ອຮັບປະກັນໃຫ້ແກ່ການຮຽນ-ການສອນ ແບບປົກກະຕິ ແລະ ຮູບແບບທາງໄກ ຫຼື ວິທີການອື່ນ ໃນເງື່ອນໄຂການແຜ່ລະບາດຂອງພະຍາດໂຄວິດ-19;

13) ແກ້ໄຂໄພຫວ່າງງານໃຫ້ຫຼຸດລົງ, ຝຶກອົບຮົມວິຊາຊີບ, ສ້າງວຽກເຮັດງານທຳໃຫ້ແຮງງານໃຫ້ຫຼາຍຂຶ້ນ, ສືບຕໍ່ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດຊາດປະຊາທິປະໄຕ ແຕ່ປີ 1954 ກັບຫຼັງ ໃຫ້ໄດ້ຕາມກົດໝາຍທີ່ວາງໄວ້; ຂະຫຍາຍອັດຕາການປົກຄຸມປະກັນສັງຄົມ ໃຫ້ຫຼາຍຂຶ້ນ ໂດຍສະເພາະພາກວິສາຫະກິດ ແລະ ປັບປຸງຄຸນນະພາບການບໍລິການຂອງລະບົບປະກັນສັງຄົມ;

14) ປະຕິບັດມາດຕະການວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໂດຍສະເພາະ ແມ່ນການໂຄສະນາ, ສຶກສາອົບຮົມການເມືອງແນວຄິດໃຫ້ທົ່ວສັງຄົມ ເປັນເຈົ້າການຈັດຕັ້ງປະຕິບັດຢ່າງເຂັ້ມງວດ;

15) ຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ການຜັນຂະຫຍາຍມາດຕາຂອງກົດໝາຍ ອອກເປັນນິຕິກຳໃຕ້ກົດໝາຍ ໃນຂົງເຂດບໍລິຫານລັດ;

16) ສ້າງຄວາມເຂັ້ມແຂງລະບົບສະຖິຕິແຫ່ງຊາດ ແລະ ຂອງຂະແໜງການໃຫ້ມີຂໍ້ມູນທີ່ຊັດເຈນ, ສະໜອງທັນເວລາ, ເພື່ອຮັບໃຊ້ການຕິດຕາມປະເມີນຜົນ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມ ແຕ່ລະດ້ານໃຫ້ສອດຄ່ອງກັບສະພາບເສດຖະກິດ-ສັງຄົມຕົວຈິງ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ລັດຖະບານຊີ້ນຳບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ຄະນະປະຈຳ, ບັນດາກຳມາທິການ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາແຫ່ງຊາດ ຊຸດທີ IX ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ